JDB

ທະນາຄານຮ່ວມພັດທະນາ
Joint Development Bank

ບົດລາຍງານປະຈຳປີ 2021

ANNUAL REPORT 2021

“ເຕີບໃຫຍ່ໄປພ້ອມກັນ”
“BLOOMING TOGETHER”

JDB
ທະນາຄານຮ່ວມພັດທະນາ
Joint Development Bank

ສຳນັກງານໃຫ່ຍ ທະນາຄານຮ່ວມພັດທະນາ
Head Quarter Location

ອາຄານເລກທີ 82, ຖະໜົນ ລ້ານຊ້າງ, Building No 82, Lanexang Ave
ບ້ານ ຫັດສະດີ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, Ban Hatsadee, Chanthabouly District, Vientiane Capital
ຕູ້ໄປສະນີ P.O. Box 3187 ໂທລະສັບ Tel: 021 - 213 531, ສາຍດ່ວນ Hotline 1499 ໂທລະສານ Fax: 021 - 213 530
Website: www.jdbbank.com.la
E-mail: info@jdbbank.la



" ເຕີບໃຫຍ່ໄປພ້ອມກັນ "

" BLOOMING TOGETHER "

ສາລະບານ
CONTENT

1	ບົດຄວາມເຫັນຂອງ ປະທານສະພາຜູ້ບໍລິຫານ ທະນາຄານຮ່ວມພັດທະນາ (ທ່ານ ເອກະພັນ ພະພິທັກ) Speech of the Chairman of the Board of Director of Joint Development Bank (Mr. Ekaphan PHAPHITHAK)	2
2	ບົດຄວາມເຫັນຂອງ ຜູ້ອຳນວຍການໃຫ່ຍ ທະນາຄານຮ່ວມພັດທະນາ (ທ່ານ ວິໄລ ສີພະພອນ) Speech of the Managing Director of Joint Development Bank (Mr. Vilay SIPHAPHONE)	5
3	ສະພາບໍລິຫານ ທະນາຄານຮ່ວມພັດທະນາ Board of Directors of The Joint Development Bank	8
4	ຄະນະກຳມະການ ຄຸ້ມຄອງບໍລິຫານ Strategic & Governance Committee	10
5	ຄະນະກຳມະການກວດສອບ Internal Inspection Committee	11
6	ຄະນະກຳມະການ ບໍລິຫານຄວາມສ່ຽງ Risk Management CommitteeExecutive Board Committee	12
7	ຄະນະອຳນວຍການ ທະນາຄານຮ່ວມພັດທະນາ Board of Management of the Joint Development Bank	13
8	ຄະນະຊີ້ນຳ ບັນດາພະແນກສະໜັບສະໜຸນ Supervisory Board of Supporting Departments	14
9	ທີປຶກສາ ທະນາຄານຮ່ວມພັດທະນາ Advisory Of The Joint Development Bank	15
10	ໂຄງຮ່າງການຈັດຕັ້ງ ປະຈຳປີ 2021 Organization chart 2021	16
11	ບົດສະຫຼຸບການດຳເນີນທຸລະກິດ ປະຈຳປີ 2021 Business Operation Summary 2021	17
12	ມອບພັນທະອາກອນປະຈຳປີ 2021	24
13	ວຽກງານການຮ່ວມມື	25
14	ວຽກງານຊ່ວຍເຫຼືອສັງຄົມ Social Supporting Work	26
15	ຂໍ້ມູນດ້ານການເງິນໂດຍຫຍໍ້ Summary of Financial Infomation	30
16	ບົດລາຍງານຂອງນັກກວດສອບອິດສະຫຼະ Report of Independent Auditor (Laos and English)	31
17	ການເຄື່ອນໄຫວ ກິດຈະກຳຕ່າງ ຂອງທະນາຄານຮ່ວມພັດທະນາ Activities of Joint Development Bank	106
18	ໜ່ວຍບໍລິການຕ່າງໆ Service Units	108

JDB
ທະນາຄານຮ່ວມພັດທະນາ
Joint Development Bank

" ຂ້າພະເຈົ້າ ໃນນາມ ປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ ຫຼື JDB ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງບັນດາ ລູກຄ້າທຸກທ່ານ ທີ່ໄວ້ວາງใจ ใช้ບໍລິການ ທະນາຄານຮ່ວມພັດທະນາ ຕະຫຼອດມາ ແລະ ຜູ້ບໍລິຫານລະດັບສູງ ຕະຫຼອດເຖິງ ພະນັກງານທຸກຄົນ ທີ່ໄດ້ທຸ້ມເທແຮງກາຍ, ແຮງໃຈ ໃນການປະຕິບັດ ໜ້າທີ່ວຽກງານຂອງຕົນ ຢ່າງຫ້າວຫັນ."

ທ່ານ ເອກະພັນ ພະພິທັກ

MR. EKAPHAN PHAPHITHACK

ປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ
Chairman, Board of Directors
Joint Development Bank.

JDB
ທະນາຄານຮ່ວມພັດທະນາ
Joint Development Bank

ທ່ານ ເອກະພັນ ພະພິທັກ
MR. EKAPHAN PHAPHITHACK

ປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ

Chairman, Board of Directors
Joint Development Bank.

ບົດປະກອບຄຳເຫັນ

Speech of Mr. Ekaphan PHAPHITHACK
Chairman, Board of Directors Joint Development Bank.

"ຂ້າພະເຈົ້າ ໃນນາມ ປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ ຫຼື JDB ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງບັນດາລູກຄ້າທຸກທ່ານ ທີ່ໄວ້ວາງใจ ใช้ບໍລິການ ທະນາຄານຮ່ວມພັດທະນາ ຕະຫຼອດມາ ແລະ ຜູ້ບໍລິຫານລະດັບສູງ ຕະຫຼອດເຖິງ ພະນັກງານທຸກຄົນ ທີ່ໄດ້ທຸ້ມເທແຮງກາຍ, ແຮງໃຈ ໃນການປະຕິບັດໜ້າທີ່ວຽກງານຂອງຕົນ ຢ່າງຫ້າວຫັນ."

" As the Chairman of the Board of Directors of Joint Development Bank or JDB, I would like to express my sincere gratitude to all customers for your trust in our services throughout the years and to our senior management officials and all employees for your physical and mental efforts in actively implementing your duties. "

ໃນປີ 2021 ເຖິງວ່າສະພາບເສດຖະກິດຂອງໂລກ ມີການຜັນແປຢ່າງສັບສົນ,ມີສິ່ງຄາມການຄ້າລະຫວ່າງປະເທດມະຫາອຳນາດ, ໄພຂົ່ມຂູ່ທາງທຳມະຊາດ ແລະການລະບາດຂອງພະຍາດໂຄວິດ-19 (COVID-19), ມີສິ່ງຄາມຢູ່ໃນບາງພູມີພາກ ເຊິ່ງເປັນປັດໃຈ ເຮັດໃຫ້ເສດຖະກິດຂອງໂລກມີການສະລົດຕົວ ແລະ ໄດ້ຮັບຜົນກະທົບພໍສົມຄວນ.

In 2021, a global economy became more complex. This complexity includes a trade war between superpowers, natural disasters, a Covid-19 pandemic, and a war in some regions. These led to a slow growth in a global economy and left significant impacts.

ເຖິງຢ່າງໃດກໍ່ຕາມ ຂ້າພະເຈົ້າ ກໍໄດ້ຕັດສິນໃຈສູງ ຫັນວິກິດໃຫ້ເປັນໂອກາດ ເພື່ອບັນລຸຜົນສຳເລັດຮ່ວມກັນ ໂດຍທະນາຄານຮ່ວມພັດທະນາ ສາມາດປະຕິບັດໄດ້ລື່ນຄາດໝາຍແຜນການທີ່ຕັ້ງໄວ້ຢ່າງໜ້າເພິ່ງພໍໃຈ ເຊິ່ງໄດ້ລະດົມທຶນເງິນຝາກຈາກລູກຄ້າ, ບັນດາຫ້າງຮ້ານຕ່າງໆ ທັງບຸກຄົນ ແລະ ນິຕິບຸກຄົນ. ໄດ້ປ່ອຍສິນເຊື່ອ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ກໍຄືການກໍ່ສ້າງໂຄງລ່າງພື້ນຖານຂອງປະເທດໂຄງການພັດທະນາຊົນນະບົດ, ເຂື່ອນໄຟຟ້ານ້ຳຕົກ, ຕາຂ່າຍໄຟຟ້າ, ສົ່ງເສີມການຜະລິດດ້ານກະສິກຳ ໃຫ້ເປັນສິນຄ້າ, ໃຫ້ສິນເຊື່ອ ແກ່ພະນັກງານ ແລະ ສິນເຊື່ອ ເພື່ອການສຶກສາ ແລະ ການຄືນກຳໄລໃຫ້ລູກຄ້າ (ແຈກລົດໃຫຍ່ໃຫ້ລູກຄ້າຜູ້ໂຊກດີ)ເຊິ່ງທັງໝົດນີ້ກໍ່ແມ່ນການກ້າຕັດສິນໃຈຂອງຜູ້ບໍລິຫານທະນາຄານຮ່ວມພັດທະນາເພື່ອສົ່ງເສີມເສດຖະກິດຂອງ ສປປ ລາວ ໃຫ້ມີຄວາມເຂັ້ມແຂງ ເຊິ່ງເຮັດໃຫ້ລູກຄ້າມີຄວາມເຊື່ອໝັ້ນ ແລະ ໄວ້ວາງใจ ໃຫ້ການສະໜັບສະໜູນ ທະນາຄານຮ່ວມພັດທະນາ ຕະຫຼອດມາ.

However, I have made a strong decision to turn a crisis into an opportunity for our joint achievements where JDB satisfactorily overachieved planned targets in mobilizing funds from natural person and legal entity depositors. In contribution to socio-economic development, JDB has financed infrastructure development projects, rural development projects, hydropower projects, electrical grid projects, and agricultural commercialization projects – as well as providing credits for office employees, loans for education, and prizes for customers (lucky draw to win cars). All of these decisions are made by JDB's Management to promote a stronger economy of Lao PDR where we have gained our customers' confidence and trust from their supports to JDB throughout the years.

ຍ້ອນໄດ້ຮັບການເຊື່ອໝັ້ນ ແລະ ໄວ້ວາງใจจากສັງຄົມ ຈຶ່ງເຮັດໃຫ້ຕາໜ່າງໜ່ວຍບໍລິການທະນາຄານຮ່ວມພັດທະນາໄດ້ມີການຂະຫຍາຍຕົວຄອບຄຸມທົ່ວປະເທດ.ທະນາຄານຮ່ວມພັດທະນາໄດ້ປະກອບສ່ວນຊ່ວຍເຫຼືອສັງຄົມມາຕະຫຼອດເຊັ່ນ: ການປະກອບຕ້ານການແຜ່ລະບາດຂອງພະຍາດໂຄວິດ-19 ໃຫ້ລັດຖະບານລາວ ຕາມຄວາມສາມາດຂອງຕົນ ເຊິ່ງມັນສະແດງອອກເຖິງຜົນງານຂອງທະນາຄານຮ່ວມພັດທະນາທີ່ໄດ້ທຸ້ມເທສະຕິປັນຍາເຂົ້າໃນການພັດທະນາປະເທດຊາດກໍຄືສັງຄົມ ແລະ ບຸກຄະລາກອນໃຫ້ມີຄວາມຮູ້ຄວາມສາມາດ ແລະ ພັດທະນາທະນາຄານຮ່ວມພັດທະນາ ໃຫ້ມີການເຕີບໃຫ່ຍຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.

With the public's confidence and trust, our network of service units has been expanded nationwide. Joint Development Bank has also contributed to our society by providing funding

support to the Lao government during the Covid-19 pandemic per our capacities. These JDB's efforts contribute to national development, as well as community and human resource development, so that we can also constantly grow Joint Development Bank

ໃນປີ 2021 ເປັນປີທີ່ມີຄວາມທ້າທາຍຫຼາຍ ສຳລັບທະນາຄານຮ່ວມພັດທະນາ, ຂ້າພະເຈົ້າພ້ອມດ້ວຍຜູ້ບໍລິຫານ ທຸກລະດັບຕະຫຼອດເຖິງພະນັກງານທຸກຄົນຈະຮ່ວມກັນພັດທະນາຄວາມຮູ້, ແນວຄິດ, ທັດສະນະຄະຕິ ພ້ອມຮັບຟັງຄຳເຫັນ ເພື່ອປັບປຸງແກ້ໄຂ ແລະ ຂໍສັນຍາວ່າ: ຂ້າພະເຈົ້າຈະບໍລິຫານ ແລະ ບໍລິການທາງດ້ານການເງິນທີ່ຄົບວົງຈອນໃຫ້ມີຄວາມທັນສະໄໝ,ມີຄວາມວ່ອງໄວ, ມີຄຸນນະພາບເພື່ອຕອບສະໜອງຄວາມຕ້ອງການຂອງກຸ່ມລູກຄ້າ ແລະ ໃສ່ໃຈການບໍລິການເປັນຫຼັກເພື່ອຍົກລະດັບຊື່ສຽງຂອງທະນາຄານຮ່ວມພັດທະນາ ໃຫ້ໄດ້ມາດຕະຖານສາກົນ ເປັນທີ່ຍອມຮັບຂອງຄົນທົ່ວສັງຄົມທຸກລະດັບ, ໃນຂົງເຂດອາຊຽນ ແລະ ສາກົນ ເທື່ອລະກ້າວ.

2021 was a very challenging year for JDB. I, and all management officials at all levels and e mployees will work together to develop our knowledge, mindset, and attitude and to listen to feedback in order to improve. I pledge that I will direct and provide a holistic steering of our financial services to be modern, swift, and quality to meet customers' needs and to focus on customers in order to enhance JDB's reputation to gradually meet an international benchmark and to be accepted by the public at all levels and amongst ASEAN and at an international level.

ທ້າຍສຸດນີ້ ຂ້າພະເຈົ້າ ຂໍອວຍໄຊໃຫ້ພອນ ແດ່ການນຳ ພັກ-ລັດ, ນັກທຸລະກິດພາຍໃນ ແລະ ຕ່າງປະເທດ, ລູກຄ້າ, ຜູ້ບໍລິຫານທຸກລະດັບ, ພະນັກງານທັງໝົດ ໃນທົ່ວປະເທດ ຈົ່ງມີສຸຂະພາບເຂັ້ມແຂງ, ມີອາຍຸຍືນຍາວ ມີຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານ ແລະ ມີຄວາມຜາສຸກຢູ່ໃນຊີວິດຂອງທ່ານ ຕະຫຼອດໄປ.

In closing, I wish our party-state leadership, both domestic and foreign business owners, customers, management officials, and all employees nationwide good health, longevity, and successes in your professional career and happiness in your personal lives.

ປະທານສະພາບໍລິຫານທະນາຄານຮ່ວມພັດທະນາ

ທ່ານ ເອກະພັນ ພະພິທັກ

Chairman, Board of Directors Joint Development Bank.

JDB
ທະນາຄານຮ່ວມພັດທະນາ
Joint Development Bank

ທ່ານ ວິໄລ ສີພະພອນ
Mr. Vilay SIPHAPHONE

ຜູ້ອຳນວຍການໃຫຍ່ ທະນາຄານຮ່ວມພັດທະນາ.
Managing Director

"ໂດຍປະຕິບັດຕາມນະໂຍບາຍ ແລະ ທິດຊີ້ນຳຂອງສະພາບໍລິຫານ ເພື່ອສືບຕໍ່ຫັນ JDB"

ໂດຍປະຕິບັດຕາມນະໂຍບາຍ ແລະ ທິດຊີ້ນຳຂອງສະພາບໍລິຫານ ເພື່ອສືບຕໍ່ຫັນ JDB ໃຫ້ເປັນໜຸ່ມຄື:ການກໍ່ສ້າງບຸກຄະລາກອນລຸ້ນສືບທອດຂຶ້ນມາເປັນຜູ້ບໍລິຫານເພື່ອເຮັດໃຫ້ທະນາຄານຮ່ວມພັດທະນາ ຫຼື JDB ໃຫ້ກາຍເປັນທະນາຄານ Digital Banking ທີ່ທັນຍຸກທັນສະໄໝ ໄດ້ມາດຕະຖານສາກົນ ແລະ ປະສົບຜົນສຳເລັດດ້ານການບໍລິການທີ່ດີເລີດ ໃຫ້ແກ່ລູກຄ້າຂອງຕົນ ຕາມມາດຕະຖານ ISO 9001: 2015.

In accordance with a policy and directive from the Board of Directors to continue to rejuvenate JDB, we have continued to train junior successors to be in Management in order to convert Joint Development Bank or JDB into digital banking that is modern and internationally standardized and to achieve customer service excellence in compliance with ISO 9001:2015.

ໃນສົກປີ 2021 ນີ້ ກອງປະຊຸມຜູ້ຖືຮຸ້ນໄດ້ຕົກລົງປັບປຸງລະບົບກົງຈັກການຈັດຕັ້ງ ນັບແຕ່ຂັ້ນສະພາບໍລິຫານ ລົງມາຫາ ຂັ້ນຄະນະຜູ້ບໍລິຫານ ຕະຫຼອດເຖິງພະນັກງານທຸກຖ້ວນໜ້າ ເພື່ອຊີ້ນຳນຳພາການຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ແຜນການດຳເນີນທຸລະກິດປະຈຳປີ ໃຫ້ປະກົດຜົນເປັນຈິງ ແລະ ເພື່ອບຸກທະລຸເປົ້າໝາຍຂອງການປະຕິບັດຕົວເລກ KPI ຂອງທຸກຂະແໜງການທຸລະກິດ ທີ່ສ້າງລາຍຮັບ ແລະ ຜົນກຳໄລແກ່ທະນາຄານ JDB.

ບົດຄຳເຫັນຂອງ ທ່ານ ວິໄລ ສີພະພອນ
ຜູ້ອຳນວຍການໃຫຍ່ ທະນາຄານຮ່ວມພັດທະນາ ປະຈຳປີ 2021

Preamble by Mr. Vilay Siphaphone
Managing Director, Joint Development Bank, 2021

In 2021, a shareholders' meeting agreed to an organizational restructuring from the Board of Directors down to the Management and all employees in order to lead a realization of a strategic plan and an annual business operation plan and to accomplish KPIs for all business lines that generate revenue and make profits for JDB.

ໃນສົກປີ 2021 ນີ້ ເຫັນວ່າປະຕິບັດໄດ້ລື່ນແຜນການປີທີ່ວາງໄວ້ຢ່າງກ້າວກະໂດດ ເປັນທີ່ເພິ່ງພໍໃຈຂອງຄະນະຜູ້ບໍລິຫານ ແລະ ພະນັກງານທຸກຄົນ ພາຍໃນທະນາຄານຮ່ວມພັດທະນາ ແລະ ເປັນການສ້າງຜົນງານເພື່ອຕ້ອນຮັບວັນສ້າງຕັ້ງທະນາຄານຮ່ວມພັດທະນາ ຄົບຮອບ 32 ປີ (ແຕ່ວັນທີ 3 ຕຸລາ 1989 – 3 ຕຸລາ2021).

In 2021 fiscal year, JDB substantially over-achieved its targets. This is satisfactory to the Management and all employees and represents a highly welcoming achievement to celebrate the 32nd anniversary of JDB's establishment (since 3rd October 1989 – 3rd October 2021).

ປັດຈຸບັນ ທະນາຄານຮ່ວມພັດທະນາ ຫຼື JDB ມີໜ່ວຍບໍລິການທັງໝົດ 64 ຈຸດບໍລິການທົ່ວປະເທດ ແລະ ມີແຜນຂະຫຍາຍຕາໜ່າງການບໍລິການອີກສູ່ເຂດຊຸມຊົນເສດຖະກິດ ເພື່ອບໍລິການລູກຄ້າຂອງຕົນ ໃຫ້ທົ່ວເຖິງ ເພື່ອສ້າງຄວາມສະດວກສະບາຍ ແລະ ຕອບສະໜອງຄວາມຕ້ອງການຂອງສັງຄົມ ເຊັ່ນ: ການຮັບຝາກ ແລະ ເບີກຖອນເງິນສົດ, ການໂອນຊຳລະສະສາງພາຍໃນ ແລະ ຕ່າງປະເທດ.

In the present, Joint Development Bank or JDB has 64 service units nationwide and also plans to expand a network of service units to economically viable communities to serve all customers in a convenient and responsive manner, including cash deposit and withdrawal services, as well as domestic and international payment services.

ໄດ້ປ່ອຍສິນເຊື່ອ ເພື່ອຊຸກຍູ້ສົ່ງເສີມທຸລະກິດ ລູກຄ້າລາຍໃຫຍ່ ໂຄງການກໍ່ສ້າງຕ່າງໆ ທີ່ຕິດພັນກັບໂຄງການຂອງລັດຖະບານ,ສົ່ງເສີມ ຜູ້ປະກອບການ ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ (SME). ນອກຈາກນັ້ນຍັງມີສິນເຊື່ອນະໂຍບາຍຫັນຊັບເປັນທຶນ ແລະ ນະໂຍບາຍສິນເຊື່ອ ໃຫ້ແກ່ພະນັກງານ, ລັດຖະກອນ, ກຳມະກອນ ຕາມໂຮງຈັກໂຮງງານຕ່າງໆໂດຍບໍ່ມີຫຼັກຊັບຄ້ຳປະກັນສຳຫຼັບຜູ້ມີລາຍຮັບເບີກຈ່າຍເງິນເດືອນຜ່ານບັນຊີຂອງທະນາຄານຮ່ວມພັດທະນາ ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ພ້ອມດຽວກັນນີ້ ທະນາຄານຮ່ວມພັດທະນາ ຍັງປ່ອຍສິນເຊື່ອເຂົ້າໃນໂຄງການບຸລິມະສິດຕ່າງໆເຊັ່ນ: ໂຄງການເຂື່ອນໄຟຟ້າ ແລະ ໂຄງການຂອງລັດທີ່ຕິດພັນກັບພັນທະບັດງົບປະມານຂອງລັດຖະບານ.

JDB has financed corporate clients and construction projects linked to public investment projects, and promoted small and medium enterprises (SME). Moreover, JDB also has asset collateralization loans and loans for office employees, civil servant, and workers at various factories without hard collaterals for those whose payroll is paid through bank accounts at JDB and BCEL. Additionally, JDB also provided credits to various priority projects, such as hydropower dam projects and public investment projects linked to government treasury bonds.

ຂ້າພະເຈົ້າ ຂໍຕາງໜ້າໃຫ້ແກ່ຄະນະຜູ້ບໍລິຫານ ພ້ອມດ້ວຍພະນັກງານທຸກຄົນ ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງ ຂໍອວຍພອນໄຊອັນປະເສີດ ໃຫ້ແກ່ລູກຄ້າທຸກໆທ່ານ ທີ່ມາໃຊ້ບໍລິການຈົ່ງປະສົບຜົນສຳເລັດຕໍ່ໜ້າທີ່ການງານຂອງທ່ານປາສະຈາກພະຍາດໂລຄາ ແລະ ສຸຂະພາບແຂງແຮງດີ.

On behalf of the Board of Directors and all employees, I would like to convey my appreciation, gratitude, and best wishes to all customers for using our services; and I wish all of you a successful career and good health.

ຜູ້ອຳນວຍການໃຫຍ່ ທະນາຄານຮ່ວມພັດທະນາ
Managing Director Joint Development Bank

JDB

ທະນາຄານຮ່ວມພັດທະນາ

" ເຕີບໃຫຍ່ໄປພ້ອມກັນ "

" BLOOMING TOGETHER "

ສະພາບໍລິຫານ ທະນາຄານຮ່ວມພັດທະນາ
Board of Directors of The Joint Development Bank

ທ່ານ ເອກະພັນ ພະພິທັກ
Mr. Ekaphan PHAPHITHACK
ປະທານສະພາບໍລິຫານ
Chairman of The Board of Directors

ທ່ານ ສູນທອນ ຈັນທະວົງ
Mr. Sounthorn CHANHTHAVONG
ຮອງປະທານ ສະພາບໍລິຫານ
Vice Chairman of Board of Directors

ທ່ານ. ວິໄລ ສີພະພອນ
Mr. Vilay SIPHAPHONE
ສະມາຊິກ ສະພາບໍລິຫານ
Executive Board Member

ທ່ານ ບຸນສະຫວ່າງ ພົລາໄຊພິທັກ
Mr. Bounsavang PHILASAYPHITHAK
ສະມາຊິກ ສະພາບໍລິຫານ
Executive Board Member

ສະພາບໍລິຫານ ທະນາຄານຮ່ວມພັດທະນາ
Board of Directors of The Joint Development Bank

ທ່ານ ນາງ ພອນສະໄໝ ສຸກຂະຜົນ
Ms. Phonesamay SOUKHAPHON
ສະມາຊິກ ສະພາບໍລິຫານ
Executive Board Member

ທ່ານ ປອ. ບົວວອນ ຈັນທະນິເລີດ
Mr.PhD. Bouavone CHANTHANILEUTH
ສະມາຊິກ ສະພາບໍລິຫານ
Executive Board Member

ທ່ານ ຄຳສີງ ສອນສິນນະວົງ
Mr. Khamsing SONESINNAVONG
ສະມາຊິກ ສະພາບໍລິຫານ
Executive Board Member

ທ່ານ ສາຄອນ ຍໍພັນໄຊ
Mr. Sakhone YORPHANXAY
ສະມາຊິກ ສະພາບໍລິຫານ
Executive Board Member

ທ່ານ ບຸນຊຸ່ມ ສີສະຫວັດ
Mr. Bounsoum SISAVAT
ສະມາຊິກ ສະພາບໍລິຫານ ຈາກພາຍນອກ
External Executive Board Member

ຄະນະກຳມະການ ຄຸ້ມຄອງບໍລິຫານ
Strategic & Governance Committee

ທ່ານ ສູນທອນ ຈັນທະວົງ
Mr. Sounthorn CHANHTHAVONG
ປະທານ ຄະນະກຳມະການ
Head of Committee

ທ່ານ ປອ. ບົວວອນ ຈັນທະນິເລີດ
Mr.PhD. Bouavone CHANTHANILEUTH
ຮອງປະທານ
Deputy Head of Committee

ທ່ານ ວິໄລ ສີພະພອນ
Mr. Vilay SIPHAPHONE
ກຳມະການ
Committee's Member

ທ່ານ ຖາວອນ ອ້ວນມາລາ
Mr. Thavone OUANMALA
ກຳມະການ
Committee's Member

ທ່ານ ຄຳຊຸ ຢ່າງ
Mr. Khamsu YANG
ກຳມະການ
Committee's Member

ທ່ານ ໄຊ ບູລິມມະວົງ
Mr. Xay BOULOMMAVONG
ກຳມະການ
Committee's Member

ຄະນະກຳມະການກວດສອບ
Internal Inspection Committee

ທ່ານ ບຸນຊຸ່ມ ສີສະຫວັດ
Mr.Bounsoum SISAVAT
ປະທານ ຄະນະກຳມະການ
Head of Committee

ທ່ານ ບຸນສະຫວ່າງ ພິລາໄຊພິທັກ
Mr.Bounsavang PHILASAYPHITAK
ຮອງປະທານ
Deputy Head of Committee

ທ່ານ ປອ. ບົວວອນ ຈັນທະນິເລີດ
Mr.PhD. Bouavone CHANTHANILEUTH
ກຳມະການ
Committee's member

ທ່ານ ພູໄຊຊະນະ ໄຊສົມບັດ
Mr. Phuxayxana XAYSOMBATH
ກຳມະການ
Committee's member

ທ່ານ ວິສູດ ບົວສິສະອາດ
Mr. Visoud BOUASISAARD
ກຳມະການ
Committee's member

ທ່ານ ນາງ ສຸດທິດາ ທຳມະວົງ
Ms. Soutthida THAMMAVONG
ກຳມະການ
Committee's member

ທ່ານ ວິຊາ ແກ້ວມະນີວົງ
Mr. Visa KEOMANIVONG
ກຳມະການ
Committee's member

ຄະນະກຳມະການ ບໍລິຫານຄວາມສ່ຽງ
Risk Management Committee

ທ່ານ ນາງ ພອນສະໄໝ ສຸກຂະພົນ
Ms. Phonesamay SOUKHAPHON
ປະທານ ຄະນະກຳມະການ
Head of Committee

ທ່ານ ອານົນ ລ້ຽວແລງ
Mr. Arnon RIEWRAENG
ຮອງປະທານ
Deputy Head of Committee

ທ່ານ ບຸນສະຫວ່າງ ພົລາໄຊພິທັກ
Mr.Bounsavang PHILASAYPHITAK
ກຳມະການ
Committee Member

ທ່ານ ວິໄລ ສີພະພອນ
Mr. Vilay SIPHAPHONE
ກຳມະການ
Committee Member

ທ່ານ ວັນໄຊ ວົງລາ
Mr. Vanxay VONGLA
ກຳມະການ
Committee Member

ທ່ານ ໄຊຊະນະ ທຳມະວົງສອນ
Mr. Xayxana THAMMAVONGSONE
ກຳມະການ
Committee Member

ຄະນະອຳນວຍການ ທະນາຄານຮ່ວມພັດທະນາ
Board of Management of the Joint Development Bank

ທ່ານ. ວິໄລ ສີພະພອນ
Mr. Vilay SIPHAPHONE
ຜູ້ອຳນວຍການໃຫຍ່
Managing Director

ທ່ານ ສາຄອນ ຍໍພັນໄຊ
Mr. Sakhone YORPHANXAY
ຮອງອຳນວຍການ
Deputy Director

ທ່ານ ຄຳສິງ ສອນສິນນະວົງ
Mr. Khamsing SONESINNAVONG
ຮອງອຳນວຍການ
Deputy Director

ທ່ານ ຄຳຊຸ ຢ່າງ
Mr. Khamsu YANG
ຮອງອຳນວຍການ
Deputy Director

ທ່ານ ນາງ ພອນສະໄໝ ສຸກຂະພົນ
Ms. Phonesamay SOUKHAPHON
ຮອງອຳນວຍການ
Deputy Director

ທ່ານ ຈັນຊະນະ ສິງຫາວົງ
Mr.Chansana SINGHAVONG
ຮອງອຳນວຍການ
Deputy Director



ທ່ານ ວິລັນເດດ ໄວຍະສົມສັກ
Mr. Vilandeth VAYASOMSACK
ຮອງອຳນວຍການ
Deputy Director

ຄະນະຊີ້ນຳ ບັນດາພະແນກສະໜັບສະໜຸນ
Supervisory Board of Supporting Departments

ທ່ານ ສູນທອນ ຈັນທະວົງ
Mr. Sounthorn CHANHTHAVONG
ຫົວໜ້າຄະນະຊີ້ນຳ
Head of Supervisor

ທ່ານ ປອ. ບົວວອນ ຈັນທະນິເລີດ
Mr.PhD. Bouavone CHANTHANILEUTH
ຮອງຫົວໜ້າຄະນະ
Deputy Head of Supervisor

ທ່ານ ຖາວອນ ອ້ວນມາລາ
Mr. Thavone OUANMALA
ຮອງຫົວໜ້າຄະນະ
Supervisor Member

ທີ່ປຶກສາ ທະນາຄານຮ່ວມພັດທະນາ
Advisory Of The Joint Development Bank

ດຣ. ວິວັດ ກິດຕິພົງໂກສົນ
Dr. Vivat KITTIPHONGKOSOL
ປະທານທີ່ປຶກສາເສດຖະກິດ
Chairman Of Economic Advisory Board

ທຸກຜົນສຳເລັດ ແມ່ນມາຈາກການເອົາใจใส่ ທຸກລາຍລະອຽດດ້ວຍຄວາມຮັບຜິດຊອບສູງ, ເປັນມືອາຊີບຂອງ ທີມງານຈະພາໃຫ້ອົງກອນປະສົບຜົນສຳເລັດ ແລະ ຕາມເປົ້າໝາຍ ເພື່ອໃຫ້ເປັນທະນາຄານທີ່ທັນສະໄໝ ແລະ ໃຫ້ ບໍລິການທີ່ດີເລີດ ແກ່ສັງຄົມຕະຫຼອດໄປ

All successful is from the finicky work with the high responsibility. With the good team Work and professional guaranteed will escort us to success and achieve the goal to become the modernized bank and best services to the society

ໂຄງຮ່າງການຈັດຕັ້ງ
Organization chart 2021



ບົດສະຫລຸບການດຳເນີນທຸລະກິດ ປະຈຳປີ 2021
Business Operation Summary 2021

I. ສະພາບລວມ

ໃນປີ 2021 ຜົນກະທົບຂອງການແຜ່ລະບາດຂອງພະຍາດໂຄວິດ-19 (COVID-19) ທີ່ແຜ່ລະບາດເປັນຮອບທີ່ສອງ ແລະ ເປັນສາຍພັນໃໝ່ແຜ່ລາມໄປທົ່ວໂລກ ເຮັດໃຫ້ອຸດສາຫະກຳການທ່ອງທ່ຽວໄດ້ຮັບຜົນກະທົບຢ່າງໜັກໜ່ວງ ແລະ ຜົນກະທົບຈາກໄພທຳມະຊາດ ແລະໄພສົງຄາມທີ່ເກີດຂຶ້ນໃນບາງພູມິພາກສ້າງຄວາມເສຍຫາຍແກ່ຊັບສິນຂອງປະຊາຊົນ ແລະ ຂອງລັດ,ເຊິ່ງໄດ້ສົ່ງຜົນກະທົບຕໍ່ເສດຖະກິດໂລກໃນວົງກ້ວາງ,ເສດຖະກິດໂລກ ມີທ່າອ່ຽງຂະຫຍາຍລະດັບຕ່ຳ ການດຳເນີນທຸລະກິດຂອງອຸດສາຫະກຳທະນາຄານເປັນສິ່ງທີ່ທ້າທາຍສຳລັບປະເທດດ້ອຍພັດທະນາ ແລະ ປະເທດກຳລັງພັດທະນາ ເນື່ອງຈາກວ່າ ປະເທດທີ່ພັດທະນາແລ້ວໄດ້ປັບອັດຕາດອກເບ້ຍເພີ່ມຂຶ້ນ.

ກອງທຶນການເງິນສາກົນ (IMF) ໄດ້ປະເມີນເສດຖະກິດມະຫາພາກຂອງ ສປປ ລາວ ຕາງໜ້າຈາກ ຫ້ອງ ການ IMF ສຳນັກງານໃຫຍ່ ໄດ້ພົບປະເຮັດວຽກກັບພາກສ່ວນປຶ່ນອ້ອມເສດຖະກິດມະຫາພາກຂອງ ສປປ ລາວ ເປັນຕົ້ນແມ່ນ ທະນາຄານແຫ່ງ ສປປ ລາວ, ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ບັນດາທະນາຄານທຸລະກິດຈຳນວນໜຶ່ງ ເພື່ອຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໜ້າວຽກຂອງແຕ່ລະພາກສ່ວນ ທີ່ໄດ້ປະກອບສ່ວນໃຫ້ແກ່ການ ພັດທະນາເສດຖະກິດ ໂດຍລວມຂອງ ສປປ ລາວ.

ສຳລັບຜົນການປະເມີນເສດຖະກິດມະຫາພາກຂອງ ສປປ ລາວ ໃນຄັ້ງນີ້, IMF ໄດ້ສະຫຼຸບວ່າ: ເສດຖະກິດຂອງ ສປປ ລາວ ກໍ່ຄືຫຼາຍປະເທດໃນທົ່ວໂລກ ແມ່ນໄດ້ຮັບຜົນກະທົບຈາກການແຜ່ລະບາດ ຂອງພະຍາດໂຄວິດ-19 ສົ່ງຜົນເຮັດໃຫ້ການຂະຫຍາຍຕົວຂອງເສດຖະກິດ ມີຈັງຫວະທີ່ຊ້າລົງ. ໃນປີ 2021, IMF ຄາດວ່າເສດຖະກິດຂອງ ສປປ ລາວ ຈະຂະຫຍາຍຕົວໃນອັດຕາ 2,1% ແລະ ຈະເພີ່ມເປັນ 3% ໃນປີ 2022 ໂດຍມີຂະແໜງກະສິກຳ ແລະ ອຸດສາຫະກຳເປັນຕົວຂັບເຄື່ອນການຂະຫຍາຍຕົວ.ພ້ອມນີ້,ກໍ່ຍັງເຫັນວ່າການຂະຫຍາຍຕົວຂອງເສດຖະກິດ ສປປ ລາວຍັງບາງອັນມີຄວາມສ່ຽງຈາກພາຍໃນ ແລະພາຍນອກທີ່ອາດສົ່ງຜົນຕໍ່ການຂະຫຍາຍຕົວຂອງເສດຖະກິດ ໃນໄລຍະຍາວ ເປັນຕົ້ນແມ່ນ ອັດຕາເງິນເຟີ້ທີ່ເພີ່ມຂຶ້ນ, ອັດຕາແລກປ່ຽນທີ່ມີຄວາມ ຜັນຜວນ ແລະ ອື່ນໆ.

I. Overview

In 2021, impacts from a second wave of COVID-19 and new variants spread throughout the globe, particularly generating impacts on a tourism industry; while there are impacts from natural disasters and wars in some regions that have damaged the people's and state's properties. These also slowed down a global economic growth. Banking operations in a banking industry became more challenging for least developed countries and developing nations as a result of interest rates raised by developed countries.

The International Monetary Fund (IMF) hasmade a macroeconomic assessment for Lao PDR. A representative of IMF's headquarters has worked with relevant macro-economic stakeholders of Lao PDR such as the Bank of Laos, Ministry of Finance, Ministry of Planning and Investment, Ministry of Industry and and Commerce, Ministry of Energy and Mines, and some commercial banks in order to monitor progress of each stakeholder who contributes to the overall socio-economic development of Lao PDR.

In this macroeconomic assessment of Lao PDR, IMF has concluded that, like other economies, Lao economy has also been affected by COVID-19 leading to a slower growth in its economy. In 2021, IMF forecasted that Lao economy would grow at a 2.1% rate and later 3% in 2022, with an agriculture sector and an industry sector being key drivers of growth. Moreover, it has been assessed that Lao PDR's economy also faced both external and internal risks that might affect its growth in the long run such as inflation, volatile exchange rates and so on.

II. ການດຳເນີນທຸລະກິດ ປະຈຳປີ 2021

2.1 ດ້ານການເງິນ

ໃນໄລຍະໜຶ່ງປີທີ່ຜ່ານມາທະນາຄານຮ່ວມພັດທະນາກໍ່ໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ເຊັ່ນດຽວກັນກັບພາກສ່ວນທຸລະກິດອື່ນໆ ແຕ່ຄະນະຜູ້ບໍລິຫານ ກໍ່ມີນະ�โยบายสุมใส่อวงกางปอยสินเชื่อให้แก่บางทุละกิด ທີ່ຍັງສາມາດດຳເນີນທຸລະກິດໄດ້ດີ ເຮັດໃຫ້ຜົນການດຳເນີນທຸລະກິດປະຈຳປີ 2021 ສາມາດປະຕິບັດໄດ້ດັ່ງນີ້:

- ຕົວເລກລາຍຮັບທັງໝົດ ສາມາດປະຕິບັດໄດ້ 141,95% ສົມທຽບໃສ່ແຜນການປີ, ຖ້າສົມທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 49,83%.
- ຕົວເລກລາຍຈ່າຍທັງໝົດ ສາມາດປະຕິບັດໄດ້ 139,77% ສົມທຽບໃສ່ແຜນການປີ, ຖ້າສົມທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 49,36%.
- ຕົວເລກກຳໄລສຸດທິ ຫຼັງອາກອນ ສາມາດປະຕິບັດໄດ້ 193,92% ສົມທຽບໃສ່ແຜນການປີ, ຖ້າສົມທຽບໃສ່ປີຜ່ານມາເພີ່ມຂຶ້ນ 58,76%.
- ຕົວເລກປະຕິບັດມອບພັນທະອາກອນທັງໝົດ ສຳລັບປີ 2021 ສົມທຽບໃສ່ປີ 2020 ເພີ່ມຂຶ້ນ 72,37%.

II. Business Operation in 2020

2.1 Financials

In the past year, Joint Development Bank (JDB) was also affected by COVID-19 like other sectors. Nonetheless, its Management issued a policy to keep financing any viable businesses that enabled the bank to have the following performance results:- A total revenue reached 141.95% of the planned target, an increase by 49.83% from the previous year

- A total expenditure reached 139.77% of the planned target, an increase by 49.36% from the previous year
- A net profit after taxes reached 193.92% of the planned target, an increase by 58.76% of from the previous year
- All tax payments for 2021, in comparison to 2020, increased by 72.37%.

2.2 ການລະດົມເງິນຝາກ

ທະນາຄານຮ່ວມພັດທະນາ ສືບຕໍ່ນຳໃຊ້ນະໂຍບາຍການກຳນົດຕົວເລກການລະດົມທຶນໃຫ້ແຕ່ລະໜ່ວຍບໍລິການຕາມຮູບແບບການກຳນົດຕົວເລກ KPI ເພື່ອເປັນເປົ້າໝາຍຍຸດທະສາດ ແລະ ຍຸດທະວິທີຫຼາກຫຼາຍເປັນຕົ້ນແມ່ນການຂະຫຍາຍຊ່ອງທາງບໍລິການຢ່າງກ້ວາງຂວາງລົງສູ່ຈຸດຊຸມຊົນຕ່າງໆໃນຂອບເຂດທົ່ວປະເທດ ມີສູນບໍລິການສຳນັກງານໃຫຍ່ທີ່ອຳນວຍຄວາມສະດວກສະບາຍ ທັນສະໄໝໂອ່ໂຖງເປັນທີ່ດຶງດູດໃຈລູກຄ້າ, ປັບປຸງລະບົບບໍລິການ ຮັກສາໄດ້ມາດຕະຖານສາກົນ ISO 9001: 2015, ນອກຈາກ ສູນບໍລິການສຳນັກງານໃຫຍ່ຍັງມີໜ່ວຍບໍລິການຫຼວງພະບາງ ແລະ ໜ່ວຍບໍລິການຫົວເມືອງເໜືອ (ແຂວງ ສະຫວັນນະເຂດ) ທີ່ໄດ້ຮັບມາດຕະຖານສາກົນ ISO 9001: 2015 ແລະ ລົງຫາລູກຄ້າ ຢູ່ຕາມສຳນັກງານ, ອົງການ, ບໍລິສັດ ແລະ ຕາມຕະຫຼາດຕ່າງໆ ເພື່ອເຜີຍແຜ່ ແລະ ອະທິບາຍຜະລິດຕະພັນທີ່ມີໃຫ້ລູກຄ້າຮັບຮູ້ເຖິງຜົນທີ່ຈະໄດ້ຮັບຈາກການນຳໃຊ້ຜະລິດຕະພັນຕ່າງໆຂອງທະນາຄານຮ່ວມພັດທະນາ; ຈັດງານພົບປະລູກຄ້າ, ການໂຄສະນາຜ່ານສື່ຕ່າງໆ ເຫັນໄດ້ວ່າສັງຄົມທົ່ວໄປໄດ້ມີຄວາມຮັບຮູ້,ເຂົ້າໃຈຜະລິດຕະພັນ ແລະ ການບໍລິການທີ່ທັນສະໄໝເຮັດໃຫ້ລູກຄ້າ ຫັນມາໃຊ້ບໍລິການກັບ ທະນາຄານຮ່ວມພັດທະນານັບມື້ເພີ່ມຂຶ້ນຜ່ານການລະດົມເງິນຝາກສາມາດປະຕິບັດໄດ້ 138,61% ສົມທຽບໃສ່ແຜນການປີ 2021, ສົມທຽບໃສ່ເງິນຝາກປີຜ່ານມາເພີ່ມຂຶ້ນ 47,26% ແລະ ການລະດົມຈຳນວນເງິນຝາກ ສາມາດປະຕິບັດໄດ້ 96,67% ສົມທຽບໃສ່ແຜນການປີ2021, ສົມທຽບໃສ່ຈຳນວນບັນຊີເງິນຝາກ ປີຜ່ານມາເພີ່ມຂຶ້ນ 15,44%.

2.2 Deposit Mobilization

JDB continues to implement a deposit mobilization policy by setting targets for our service units based on KPIs and as strategic goals and tactics. For instance, these include expanding our service network to various communities nationwide with a convenient, modern, ample, and attractive headquarters. We also have maintained an ISO 9001:2015.

Besides a service unit at the headquarters and our service units in Luang Prabang and North Huamuang (Savannakhet province) have also met ISO 9001:2015. They also paid visits to clients at their offices, organizations, companies, and markets in order to promote and explain about existing products from JDB. We organized meet-and-greet events and advertised via various channels to raise public awareness and promote our modern products and services to gradually attract more customers, which has led to reaching a 138.61% of all deposits in comparison to a planned target for 2021 or an increase by 47.26% from the previous year. An amount of deposit bank accounts reached 96.67% of a planned target in 2021 or an increase of 15.44% of a total number of deposit bank accounts from the previous year.

2.3 ການປ່ອຍສິນເສື່ອ

ທະນາຄານຮ່ວມພັດທະນາ ສືບຕໍ່ປະກອບສ່ວນພັດທະນາເສດຖະກິດຂອງປະເທດ ຕາມແຜນຍຸດທະສາດ 5 ປີ ຄັ້ງທີ 2 ແຕ່ປີ 2020-2025 ທີ່ກຳນົດໄວ້ຄື: ໜ່ວຍບໍລິການ ຢູ່ທ້ອງຖິ່ນໃດໃຫ້ປະກອບສ່ວນພັດທະນາທ້ອງຖິ່ນນັ້ນໂດຍການລົງແນະນຳຜະລິດຕະພັນສິນເຊື່ອ ທີ່ເຫັນວ່າເໝາະສົມ ເພື່ອເປັນທຶນປະຕິບັດໂຄງການທີ່ມີປະສິດທິຜົນລວມທັງສະໜອງທຶນໃຫ້ແກ່ທຸລະກິດຂະໜາດນ້ອຍ, ຂະໜາດກາງ, ການສ້າງເສດຖະກິດຄອບຄົວເພື່ອແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນຢູ່ແຕ່ລະທ້ອງຖິ່ນ, ໃນປີ 2021 ທະນາຄານຮ່ວມພັດທະນາໄດ້ປ່ອຍສິນເຊື່ອ ດ້ວຍຫຼາຍຜະລິດຕະພັນ ໂດຍປະກອບມີ: ສິນເຊື່ອລູກຄ້າລາຍໃຫຍ່ (Corporate Loan), ສິນເຊື່ອຂະໜາດນ້ອຍ ແລະ ຂະໜາດກາງ (SME),ສິນເຊື່ອຫັນຊັບເປັນທຶນ, ສິນເຊື່ອພະນັກງານລັດຖະກອນ, ສິນເຊື່ອເພື່ອການສຶກສາ ແລະ ສິນເຊື່ອສ່ວນບຸກຄົນໂດຍປ່ອຍສິນເຊື່ອເພີ່ມຂຶ້ນ 76,50% ຂອງແຫຼ່ງທຶນ, ເຊິ່ງສາມາດປະຕິບັດໄດ້ 193,53% ສົມທຽບໃສ່ແຜນການປີ 2021, ຖ້າສົມທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 70,23%.

2.3 Credits

JDB continues to contribute to national economic development per our 2nd Five-Year Strategic Plan (2020-2025), which provides that a service unit in a certain locality shall contribute to such local development by introducing appropriate credit products to finance effective projects and to finance micro, small, and medium enterprises in order to improve people's livelihoods. In 2021, JDB provided credits via various products, including corporate loans, SME loans, asset collateralization loans, civil servant loans, education loans, and personal loans where a total loan disbursed increased to 76.5% of the total fund portfolio. This reached 193.5% when compared to a planned target in 2021 – or equivalent to an increase by 70.23%.

2.4 ການອອກຜະລິດຕະພັນໃໝ່, ໂປຣໂมชัน ແລະ ການສົ່ງເສີມການຕະຫຼາດ

ພະແນກການຕະຫຼາດ ເປັນເຈົ້າການໃນການອອກຜະລິດຕະພັນໃໝ່, ສົ່ງເສີມຂາຍຜະລິດຕະພັນ ດ້ວຍການໃຊ້ຍຸດທະວິທີທີ່ຫຼາກຫຼາຍ ພາຍໃຕ້ການດຳລົງແບບແຜນຊີວິດໃໝ່ ເປັນຕົ້ນແມ່ນ ເຮັດການໂຄສະນາຜ່ານສື່ຕ່າງໆ ເຊັ່ນ: ຜ່ານໜັງສືພິມ, ວິທະຍຸ, ໂທລະພາບ, Facebook, Website, ປ້າຍໂຄສະນາ, ສົມທົບກັບ ໜ່ວຍບໍລິການ ຈັດງານ Events ຢູ່ຕາມງານເທດສະການ, ຕະຫຼາດ ແລະ ຮ້ານອາຫານ ທີ່ເປັນຄູ່ຮ່ວມທຸລະກິດ (Partner) ກັບທະນາຄານຮ່ວມພັດທະນາ ເພື່ອໂຄສະນາ ແລະ ຂາຍຜະລິດຕະພັນ; ລົງຕັ້ງບູດໂຄສະນາຢູ່ກັບບໍລິສັດ ທີ່ເບີກຈ່າຍເງິນເດືອນຜ່ານ JDB, ຈັດລາຍການ Live ສົດ, ໄດ້ຈົກສະຫຼາກລາງວັນຕ່າງໆ ເຊິ່ງຈະມີການມອບລາງວັນໃຫຍ່ ໃຫ້ແກ່ລູກຄ້າ ຄື: ລາງວັນພ້ອມທັງຈັດງານພົບປະລູກຄ້າເພື່ອເຮັດໃຫ້ລູກຄ້າມາໃຊ້ບໍລິການກັບທະນາຄານຮ່ວມພັດທະນານັບມື້ເພີ່ມຂຶ້ນ,ພ້ອມກັນນັ້ນພະແນກການຕະຫຼາດ ກໍໄດ້ຕິດຕາມການປະຕິບັດຕົວເລກ KPI ຜະລິດຕະພັນຕ່າງໆທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ, ມີການຜະລິດລາຍການເກມ ເພື່ອຊ່ວຍເຫຼືອສັງຄົມເຮັດໃຫ້ລູກຄ້າຮັບຮູ້ ທະນາຄານຮ່ວມພັດທະນາ ນັບມື້ນັບຫຼາຍຂຶ້ນ.

ໃນໄລຍະຜ່ານມາ ທະນາຄານຮ່ວມພັດທະນາໄດ້ປ່ອຍສິນເຊື່ອເຂົ້າໃນການສ້າງສາເສດຖະກິດ-ສັງຄົມກໍຄືການກໍ່ສ້າງພື້ນຖານໂຄງລ່າງຂອງປະເທດເຮົາ ແລະ ໄດ້ປະກອບສ່ວນຊ່ວຍເຫຼືອສັງຄົມຕະຫຼອດມາ. JDB ຕ້ອງໄດ້ອອກແຮງສູ້ຊົນສ້າງຜົນກຳໄລໃຫ້ບັນລຸເປົ້າໝາຍທີ່ວາງໄວ້ ເພື່ອປະກອບສ່ວນມອບພັນທະອາກອນໃຫ້ກະຊວງການເງິນເພື່ອສ້າງສາພັດທະນາປະເທດຊາດ ໃຫ້ມີ ຄວາມຈະເລີນຮຸ່ງເຮືອງສີວິໄລ ໄປຕາມຄຳຂວັນຂອງ ທະນາຄານຮ່ວມພັດທະນາ “ເຕີບໃຫຍ່ໄປພ້ອມກັນ”.

2.4 New Products, Promotions, and Marketing

A marketing department takes lead in developing new products and promoting products by using various tactics under a “new normal,” particularly advertising through various media such as newspapers, radio, television, Facebook, website, and billboard. This department collaborated with service units to organize events in various festivals, markets, and JDB’s partner restaurants for advertising and selling products. They set up exhibition booths at companies that use JDB’s service for payroll payments, organizing live broadcasting (via Facebook), and arranging lucky draws with big prizes to attract more customers to JDB. Also, a marketing department also monitors KPIs for various products under its responsibility. It produced the game shows to help communities and to raise public awareness on JDB.

Throughout the years, JDB has provided credits to contribute to socio-economic development through developing our country’s infrastructure and to contribute to social supports. JDB strived to realize goals in order to contribute to taxes collected by the Ministry of Finance for country's prosperity under the JDB’s motto of “**Blooming Together.**”

JDB

ທະນາຄານຮ່ວມພັດທະນາ

ໜ່ວຍບໍລິການ ທະນາຄານຮ່ວມພັດທະນາ

“ເຕີບໃຫ່ຍໄປພ້ອມກັນ”

“BLOOMING TOGETHER”

LINE QR code

Website www.jdbbank.com.la

jdbbankofficial

Hotline 1499

JDB
ທະນາຄານຮ່ວມພັດທະນາ

ມອບພັນທະອາກອນປະຈຳປີ 2021

JDB
ທະນາຄານຮ່ວມພັດທະນາ

ວຽກງານການຮ່ວມມື

ທະນາຄານ ຮ່ວມພັດທະນາ ແລະ ຄັງເງິນແຫ່ງຊາດ ກະຊວງ ການເງິນ

ເຊັນສັນຍາຮ່ວມມືລະຫว่ານ ທະນາຄານ ພັດທະນາລາວ ແລະ ວິທະຍາໄລ ຊັບພະວິຊາ

ເຊັນສັນຍາເງິນ ກູ້ເພື່ອການສຶກສາ ວິທະຍາໄລ ດົງຄຳຊ້ານ

JDB
ທະນາຄານຮ່ວມພັດທະນາ

ວຽກງານຊ່ວຍເຫຼືອສັງຄົມ

ມອບເງິນຊ່ວຍເຫຼືອໃຫ້ຄະນະສະເພາະກິດ ຕ້ານພະຍາດໂຄວິດ-19

ມອບເຄື່ອງຊ່ວຍເຫຼືອ ກະຊວງສາທາ

ມອບເຄື່ອງຊ່ວຍເຫຼືອ ໃຫ້ກົມ 213

ມອບເງິນ ຊ່ວຍກະຊວງປ້ອງກັນປະເທດ

ມອບເງິນຕ້ານໂຄວິດ ໃຫ້ນະຄອນຫຼວງວຽງຈັນ

ວຽກງານຊ່ວຍເຫຼືອສັງຄົມ

ມອບເຄື່ອງຊ່ວຍເຫຼືອໃຫ້ ແຂວງບໍ່ແກ້ວ

ມອບເຄື່ອງຊ່ວຍເຫຼືອໃຫ້ ແຂວງຫຼວງພະບາງ

ມອບເຄື່ອງຊ່ວຍເຫຼືອໃຫ້ ແຂວງຊຽງຂວາງ

ມອບເຄື່ອງຊ່ວຍເຫຼືອໃຫ້ ແຂວງອຸດົມໄຊ

ມອບເຄື່ອງຊ່ວຍເຫຼືອໃຫ້ ແຂວງຫຼວງນ້ຳທາ

ມອບເຄື່ອງຊ່ວຍເຫຼືອໃຫ້ ແຂວງວຽງຈັນ

ວຽກງານຊ່ວຍເຫຼືອສັງຄົມ

ມອບເຄື່ອງຊ່ວຍເຫຼືອໃຫ້ ແຂວງບໍລິຄຳໄຊ

ມອບເຄື່ອງຊ່ວຍເຫຼືອໃຫ້ ແຂວງຄຳມ່ວນ

ມອບເຄື່ອງຊ່ວຍເຫຼືອໃຫ້ ແຂວງສະຫວັນນະເຂດ

ມອບເຄື່ອງຊ່ວຍເຫຼືອໃຫ້ ແຂວງເຊກອງ

ມອບເຄື່ອງຊ່ວຍເຫຼືອໃຫ້ ແຂວງຈຳປາສັກ

ມອບເຄື່ອງຊ່ວຍເຫຼືອໃຫ້ ແຂວງສາລະວັນ

ວຽກງານຊ່ວຍເຫຼືອສັງຄົມ

ມອບເຂົ້າສານ ມະຫາໄລແຫ່ງຊາດ

ມອບເຂົ້າສານວິງການໄວຍະການສູງສຸດ

ມອບເຂົ້າສານ ກະຊວງສຶກສາ

ມອບເຂົ້າສານ ວິທະຍາໄລ ສັບພະວິຊາ

ມອບເຂົ້າສານ ວິທະຍາໄລ ດົງຄຳຊ້າງ

ມອບເຂົ້າສານ ວິທະຍາໄລ ປາກປາສັກ

ມອບເຂົ້າສານ ວິທະຍາໄລ ສົນລະປະສຶກສາ

ມອບເຂົ້າສານ ຄະນະມົດຕິສາດ -ລັດຖະສາດ

ມອບເຂົ້າສານ ໂຮງຮຽນການຄຸ້ງ ລາວ-ເຍຍລະມັນ

ມອບເຂົ້າສານ ວິທະຍາໄລ ພາລະສຶກສາ

ມອບເຂົ້າສານ ສະຖາບັນລັດຕະນະ

ມອບເຂົ້າສານ ຊ່ວຍເຫຼືອໂຮງ ຊັບພະວິຊາ

Financial Highlight

Mio LAK

	2012	2013	2014	2015	2016	2017	2018	2019	2020	2021
Asset	679,121	1,050,539	1,079,827	1,613,295	2,356,382	2,889,413	3,632,186	5,018,043	7,679,049	10,970,251
Deposit to customers	469,978	683,339	690,943	1,125,293	1,873,694	2,356,742	2,925,232	4,240,095	5,945,355	8,727,580
Loan	258,959	350,160	513,024	782,067	1,272,882	1,913,425	2,190,461	3,314,709	4,595,516	7,566,039



	2012	2013	2014	2015	2016	2017	2018	2019	2020	2021
Revenues	74,140	70,155	116,952	162,523	230,949	308,455	278,890	356,325	505,037	726,306
Expenses	64,381	68,592	110,366	159,370	225,784	302,177	271,052	316,663	419,353	592,116
Profit	9,760	1,563	6,586	3,143	5,166	6,278	7,838	39,662	85,684	134,190



ບົດລາຍງານຂອງຜູ້ກວດສອບບັນຊີອິດສະຫຼະ

ເຖິງ: ຄະນະບໍລິຫານຂອງທະນາຄານ ທະນາຄານ ຮ່ວມພັດທະນາ

ຄວາມເຫັນ

ພວກເຮົາມີຄວາມເຫັນວ່າເອກະສານລາຍງານການເງິນ ຂອງ ທະນາຄານ ຮ່ວມພັດທະນາ (ທະນາຄານ) ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2021 ໄດ້ສະແດງສະຖານະທາງການເງິນຂອງທະນາຄານ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບລະບຽບການ ແລະ ແຈ້ງການທີ່ກ່ຽວຂ້ອງ ຂອງ ທະນາຄານ ແຫ່ງ ສປປ ລາວ ແລະ ນະໂຍບາຍການບັນຊີ ຊຶ່ງອະທິບາຍໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານສະບັບນີ້.

ເອກະສານລາຍງານການເງິນທີ່ກວດສອບ

ເອກະສານລາຍງານການເງິນຂອງທະນາຄານປະກອບດ້ວຍ:

- ໃບລາຍງານຜົນໄດ້ຮັບ ສຳລັບປີສິ້ນສຸດມື້ດຽວກັນ
- ໃບລາຍງານຖານະການເງິນ ວັນທີ 31 ທັນວາ 2021
- ໃບລາຍງານສ່ວນປ່ຽນແປງທຶນ ສຳລັບປີສິ້ນສຸດມື້ດຽວກັນ
- ໃບລາຍງານກະແສເງິນສົດ ສຳລັບປີສິ້ນສຸດມື້ດຽວກັນ ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ສັງລວມຫຼັກການບັນຊີທີ່ສຳຄັນ ແລະ ຂໍ້ມູນອະທິບາຍອື່ນໆ.

ພື້ນຖານໃນການອອກຄວາມເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs) ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ມາດຕະຖານໄດ້ລະບຸໄວ້ໃນໜ້າທີ່ຮັບຜິດຊອບຂອງຜູ້ກວດສອບພາຍນອກ ສຳລັບການກວດສອບ ເອກະສານລາຍງານການເງິນ ຂອງບົດລາຍງານພວກເຮົາ.

ພວກເຮົາເຊື່ອວ່າຫລັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເຫມາະສົມເພື່ອເປັນພື້ນຖານສຳລັບການອອກຄວາມເຫັນຂອງພວກເຮົາ.

ຄວາມເປັນອິດສະຫລະ

ພວກເຮົາມີຄວາມເປັນອິດສະຫຼະ ຈາກ ທະນາຄານ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີ (ລວມເຖິງມາດຕະຖານຄວາມເປັນອິດສະຫຼະສາກົນ) ທີ່ກຳນົດໂດຍຄະນະກຳມະການຈັນຍາບັນ ນານາຊາດ ສຳລັບນັກບັນຊີ (IESBA Code). ພວກເຮົາໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ, ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ (IESBA Code).

ເນັ້ນໜັກໃສ່ໃນເລື່ອງ - ພື້ນຖານ ການບັນຊີ ແລະ ຂໍ້ຫ້າມໃນການແຈກຢາຍ ແລະ ການນຳໃຊ້ບົດລາຍງານການເງິນ.

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍເຖິງພື້ນຖານການກະກຽມເອກະສານລາຍງານການເງິນ. ເອກະສານລາຍງານການເງິນນີ້ໄດ້ຖືກກະກຽມຕາມນະໂຍບາຍການບັນຊີຂອງທະນາຄານທີ່ໄດ້ອະທິບາຍໄວ້ ໃນບົດຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ. ເຊິ່ງເອກະສານລາຍງານການເງິນອາດບໍ່ເໝາະສົມກັບວັດຖຸປະສົງອື່ນ.

ບົດລາຍງານຂອງພວກເຮົາມີໄວ້ສຳລັບທະນາຄານ ແລະ ທະນາຄານແຫ່ງ ສປປ ລາວ, ບໍ່ຄວນແຈກຍາຍໃຫ້ບຸກຄົນອື່ນ ຫຼື ນຳໃຊ້ໂດຍບຸກຄົນອື່ນທີ່ບໍ່ແມ່ນທະນາຄານ ແລະ ທະນາຄານແຫ່ງ ສປປ ລາວ. ຄວາມເຫັນຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກເລື່ອງທີ່ກ່າວມາຂ້າງເທິ້ງນີ້.

ຄວາມຮັບຜິດຊອບຂອງຄະນະຜູ້ອຳນວຍການ ຕໍ່ເອກະສານລາຍງານການເງິນ

ຄະນະຜູ້ອຳນວຍການມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບ ລະບຽບການ ການບັນຊີທີ່ກ່ຽວຂ້ອງ ແລະ ແຈ້ງການ ຂອງ ທະນາຄານແຫ່ງ ສປປ ລາວ ແລະ ນະໂຍບາຍການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ອຳນວຍການໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນທີ່ປາສະຈາກ ການລາຍງານບໍ່ຖືກຕ້ອງ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ອຳນວຍການມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດ ຂອງທະນາຄານ ໃນການດຳເນີນງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບ ກິດຈະການ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ, ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນ ເຊິ່ງລວມຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າເປັນສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີຕະຫຼອດການກວດສອບ, ການດຳເນີນງານຂອງພວກເຮົາລວມມີ:

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ. ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພວກເຮົາໄດ້ຮັບ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ແທດເໝາະກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບຄຸມພາຍໃນຂອງທະນາຄານ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ບໍລິຫານ.
- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ບໍລິຫານ ແລະ ຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີປັດໃຈໃຫ້ເກີດຂໍ້ສົງໃສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງທະນາຄານ ຫຼື ບໍ່, ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງບັນທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ໄດ້ເປີດເຜີຍກ່ຽວກັບເອກະສານລາຍງານການເງິນເຊິ່ງການເປີດເຜີຍດັ່ງກ່າວບໍ່ພຽງພໍທີ່ຈະເຮັດໃຫ້ ຄວາມເຫັນຂອງພວກເຮົາຈະປ່ຽນແປງໄປ ຂໍ້ສະຫຼຸບຂອງພວກເຮົາຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍຕາມ ເຫດການ ຫຼື ສະພາບຕົວຈິງໃນອນາຄົດອາດເປັນສາເຫດໃຫ້ທະນາຄານບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ພວກເຮົາໄດ້ສື່ສານກັບຜູ້ບໍລິຫານ ກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້. ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກຜ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງການກວດສອບຂອງພວກເຮົາ.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ

ໂດຍ: ອະພິສິດ ທ່ຽງຕົ້ງພົນໂຍ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ
29 ເມສາ 2022

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

		ບົດ ອະທິບາຍ	2021 ກີບ	2020 ກີບ
A.	**ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ**			
1.	ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ	4	524.715.359.547	329.731.830.822
2.	ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ	4	(385.379.538.559)	(259.603.257.712)
I.	**ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ**		**139.335.820.988**	**70.128.573.110**
3	ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ	5	156.402.282.832	141.232.161.868
4	ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ	5	(15.388.848.120)	(9.434.253.380)
5	(ຂາດທຶນ)/ກຳໄລສຸດທິ ຈາກການລົງທຶນໃນຫຼັກຊັບ	6	7.947.669.420	(930.000.000)
6	ກຳໄລສຸດທິ ຈາກການຊື້-ຂາຍເງິນຕາຕ່າງປະເທດ	9	32.134.036.671	26.515.104.641
II.	**ລາຍຮັບສຸດທິຈາກການດຳເນີນງານ**		**320.430.961.791**	**227.511.586.239**
B	**ລາຍຮັບ ແລະ ລາຍຈ່າຍອື່ນໆ**			
7	ລາຍຮັບອື່ນໆຈາກການດຳເນີນງານ	7	5.106.808.165	8.487.552.820
8	ລາຍຈ່າຍບໍລິຫານ		(106.585.915.934)	(95.100.281.034)
8.1	ເງິນເດືອນ ແລະ ຄ່າໃຊ້ຈ່າຍກ່ຽວກັບພະນັກງານ	8	(54.317.781.282)	(48.330.262.130)
8.2	ລາຍຈ່າຍອື່ນໆຈາກການບໍລິຫານ	10	(52.268.134.652)	(46.770.018.904)
9	ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	19; 20	(27.932.538.925)	(21.034.031.212)
10	ລາຍຈ່າຍອື່ນໆໃນການດຳເນີນງານ	11	(21.942.013.015)	(12.768.250.609)
11	ເງິນແຮສຸດທິສຳລັບໜີ້ຕ້ອງຮັບທວງຍາກລົງເປັນລາຍຈ່າຍ		292.064.730	2.076.211.390
III.	**ລວມກຳໄລກ່ອນເສຍອາກອນ**		**169.369.366.812**	**109.172.787.594**
12	ອາກອນກຳໄລພາຍໃນປີ	27	(35.178.995.109)	(23,489.074.122)
IV.	**ກຳໄລຫລັງເສຍອາກອນ**		**134.190.371.703**	**85.683.713.472**

ກະກຽມໂດຍ:

ທ່ານ ຄຳສິງ ສອນສິນນະວົງ
ຮອງອຳນວຍການ - ຫົວໜ້າບັນຊີ
ນະຄອນຫລວງວຽງຈັນ, ສປປ ລາວ
29 ເມສາ 2022

ທະນາຄານ ຮ່ວມພັດທະນາ ຈຳກັດ JOINT DEVELOPMENT BANK

ອະນຸມັດໂດຍ:

ທ່ານ ວິໄລ ສີພະພອນ
ຜູ້ອຳນວຍການໃຫຍ່

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານຖານະການເງິນ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

		ບົດ ອະທິບາຍ	2021 ກີບ	2020 ກີບ
	ຊັບສິນ			
I	**ເງິນສົດ ແລະ ເງິນຝາກຢູ່ກັບ ທຫລ**		**1.912.677.709.346**	**2.186.223.607.571**
	1. ເງິນສົດໃນຄັງ	12	759.710.458.567	720.715.407.800
	2. ເງິນຝາກແຂບັງຄັບ ແລະ ເງິນຝາກກະແສລາຍວັນ	13	1.152.967.250.779	1.465.508.199.771
II	**ໜີ້ຕ້ອງຮັບຈາກທະນາຄານອື່ນ**	14	**309.597.231.965**	**236.012.927.446**
	1. ເງິນຝາກກະແສລາຍວັນ		160.550.196.180	173.200.203.737
	2. ເງິນຝາກມີກຳນົດ		80.000.000.000	18.502.000.000
	3. ເງິນຝາກປະຢັດ		69.047.035.785	44.310.723.709
III	**ການລົງທຶນໃນຫລັກຊັບ**	15	**382.368.143.544**	**29.350.000.000**
	1. ຫຼັກຊັບປະເພດມີໄວ້ເພື່ອຂາຍ		2.350.000.000	2.350.000.000
	2. ຫຼັກຊັບປະເພດຖືໄວ້ຈົນຄົບກຳນົດ		380.018.143.544	27.000.000.000
IV	**ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ຫລັງຫັກ ເງິນແຂສະເພາະສຳລັບກິດຈະກຳສິນເຊື່ອ**	16	**7.566.038.980.897**	**4.595.516.104.427**
V	**ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ**	17	**1.187.780.000**	**854.440.000**
VI	**ຊັບສິນບັດຄົງທີ່**		**261.166.854.777**	**233.469.119.490**
	1. ການກໍ່ສ້າງກຳລັງດຳເນີນ ແລະ ຊັບສິນບັດຄົງທີ່ພວມເຄື່ອນຍ້າຍ	18	8.094.624.961	2.751.157.513
	2. ຊັບສິນບັດຄົງທີ່ບໍ່ມີຕົວຕົນ	19	150.445.255.563	137.921.992.665
	3. ຊັບສິນບັດຄົງທີ່ມີຕົວຕົນ	20	102.626.974.253	92.795.969.312
VII	**ຊັບສິນອື່ນໆ**		**537.214.153.695**	**397.622.772.236**
	1. ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ		107.858.827.015	33.723.803.830
	2. ຊັບສິນອື່ນໆ	21	429.355.326.680	363.898.968.406
	ລວມຊັບສິນ		**10.970.250.854.224**	**7.679.048.971.170**

ໃບລາຍງານຖານະການເງິນ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

		ບົດ ອະທິບາຍ	2021 ກີບ	2020 ກີບ
	ໜີ້ສິນ ແລະ ທຶນ			
I	**ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ**	22	**1.166.258.757.310**	**943.108.026.948**
	1. ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ		8.296.295.035	1.448.026.948
	2. ເງິນຝາກມີກຳນົດ		255.587360.000	168.360.000.000
	3. ເງິນກູ້ຢືມຈາກທະນາຄານອື່ນ		901.902.617.128	773.300.000.000
	4. ໜີ້ຕ້ອງສົ່ງອື່ນໆ		472.485.147	-
II	**ໜີ້ຕ້ອງສົ່ງໃຫ້ລູກຄ້າ**	23	**8.727.580.548.918**	**5.945.354.898.355**
	1. ເງິນຝາກກະແສລາຍວັນ, ເງິນຝາກປະຫຍັດ ແລະ ເງິນຝາກມັດຈຳ		2.022.939.282.416	1.552.200.736.325
	2. ເງິນຝາກມີກຳນົດ		6.704.639.766.502	4.393.152.311.830
	3. ໜີ້ຕ້ອງສົ່ງອື່ນໆ		1.500.000	1.850.200
III	**ໜີ້ສິນອື່ນໆ**		**402.539.492.652**	**223.783.535.954**
	1. ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ		291.125.871.465	188.469.815.564
	2. ໜີ້ສິນອື່ນໆ		111.413.621.187	35.313.720.390
	ລວມໜີ້ສິນ		**10.296.378.798.880**	**7.112.246.461.257**
IV	**ທຶນ ແລະ ຄັງສຳຮອງ**			
	1. ທຶນຈົດທະບຽນ	24	424.666.100.000	404.666.100.000
	2. ຄັງສະສົມຕາມລະບຽບການ	25	17.351.998.475	8.960.056.385
	3. ຄັງຂະຫຍາຍທຸລະກິດ	25	9.030.673.961	4.834.702.916
	4. ເງິນແຮທົ່ວໄປສຳລັບກິດຈະກຳດ້ານສິນເຊື່ອ	16.3	37.906.011.116	22.695.329.628
	5. ເງິນແຮຊັບສິນທີ່ບໍ່ສາມາດເກັບຄືນໄດ້		94.029.775.080	94.029.775.080
	6. ຂາດທຶນສະສົມ		90.887.496.712	31.616.545.904
	ລວມທຶນ		**673.872.055.344**	**566.802.50.913**
	ລວມໜີ້ສິນ ແລະ ທຶນ		**10.970.250.854.224**	**7.679.048.971.170**

ກະກຽມໂດຍ:

ທ່ານ ຄຳສິງ ສອນສິນນະວົງ
ຮອງອຳນວຍການ - ຫົວໜ້າບັນຊີ
ນະຄອນຫລວງວຽງຈັນ, ສປປ ລາວ
29 ເມສາ 2022

ອະນຸມັດໂດຍ:

ທ່ານ ວິໄລ ສີພະພອນ
ຜູ້ອຳນວຍການໃຫຍ່

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

	ທຶນຈົດທະບຽນ ກີບ	ຄັງສະສົມຕາມລະບຽບການ ກີບ	ຄັງຂະຫຍາຍທຸລະກິດ ກີບ	ເງິນແຮທົ່ວໄປ ສຳລັບກິດຈະກຳດ້ານສິນເຊື່ອ ກີບ	ສ່ວນປ່ຽນແປງຈາກການຕີລາຄາຊັບສິນຄືນໃໝ່ ກີບ	ກຳໄລສະສົມ ກີບ	ລວມ ກີບ
ຍອດເຫລືອໃນວັນທີ 31 ທັນວາ 2021	**404.666.100.000**	**8.960.056.385**	**4.834.702.916**	**22.695.329.628**	**94.029.775.080**	**31.616.545.904**	**566.802.509.913**
ກຳໄລສຸດທິພາຍໃນປີ	-	-	-	-	-	134.190.371.703	**134.190.371.703**
ທຶນຈົດທະບຽນ ເພີ່ມເຕີມ (ບົດອະທິບາຍ 24)	20.000.000.000	-	-	-	-	-	**20.000.000.000**
ແບ່ງເຂົ້າຄັງສະສົມຕາມລະບຽບການພາຍໃນປີ (ບົດອະທິບາຍ 25)	-	-	4.195.971.045	-	-	(4.195.971.045)	-
ເງິນປັນຜົນ (ບົດອະທິບາຍ 26)	-	-	-	-	-	(62.331.507.760)	**(62.331.507.760)**
ສ່ວນປ່ຽນແປງກອງທຶນສຳຮອງ	-	8.391.942.090	-	-	-	(8.391.942.090)	
ສຳຮອງໜີ້ເສຍ (ບົດອະທິບາຍ 25)	-	-	-	15.210.681.488	-	-	**15.210.681.488**
ຍອດເຫລືອໃນວັນທີ 31 ທັນວາ 2021	**424.666.100.000**	**17.351.998.476**	**9.030.673.961**	**37.906.011.116**	**94.029.775.080**	**90.887.496.712**	**673.872.055.344**

ກະກຽມໂດຍ:

ທ່ານ ຄຳສິງ ສອນສິນນະວົງ
ຮອງອຳນວຍການ - ຫົວໜ້າບັນຊີ

ອະນຸມັດໂດຍ:

ທ່ານ ວິໄລ ສີພະພອນ
ຜູ້ອຳນວຍການໃຫຍ່

ນະຄອນຫລວງວຽງຈັນ, ສປປ ລາວ
29 ເມສາ 2022

ທະນາຄານ ຮ່ວມພັດທະນາ ຈຳກັດ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2021

	ທຶນຈົດທະບຽນ ລ້ານກີບ	ຄັງສະສົມຕາມລະບຽບການ ລ້ານກີບ	ຄັງຂະຫຍາຍທຸລະກິດ ລ້ານກີບ	ເງິນແຮທົ່ວໄປ ສຳລັບກິດຈະກຳດ້ານສິນເຊື່ອ ລ້ານກີບ	ເງິນແຮຊັບສິນທີ່ບໍ່ສາມາດເກັບຄືນໄດ້ ລ້ານກີບ	ເງິນແຮອື່ນໆ ລ້ານກີບ	ລວມ ລ້ານກີບ
